# VI. ຂັ້ນຕອນການສະເໜີ ແລະ ອະນຸມັດ

ຕອບແບບສອບຖາມການປະເມີນຕົນເອງ (SAQ) ແລະ ປະກອບຂໍ້ມູນຕາມແບບພິມໃບສະເໜີຂອງ ລັດຖະການພາສີ

↓

ຍື່ນແບບພິມໃບສະເໜີ ພ້ອມ SAQ ແລະ ເອກະສານຄັດຕິດມາຍັງກົມພາສີ

↓

ກົມພາສີ ດຳເນີນການກວດກາຂໍ້ມູນເອກະສານ ແລະ ກວດກາດ້ານການປະຕິບັດລະບຽບກົດໝາຍ

↓

ລົງກວດກາສະຖານທີ່ຕົວຈິງຂອງບໍລິສັດ

↓

ອອກໃບຢັ້ງຢືນຜູ້ປະກອບການມາດຕະຖານເອອີໂອ

# ຂໍ້ມູນສຳລັບການສອບຖາມເພີ່ມເຕີມ


**ກົມພາສີ**
**ພະແນກກວດສອບຄືນການແຈ້ງພາສີ**
**ແຜນງານຜູ້ປະກອບການມາດຕະຖານ ເອອີໂອ**

**ໂທລະສັບ: +856 021 454840**
**ໂທລະສານ: +856 021 454841**


ສາມາດເອົາແບບພິມໃບສະໝັກ, SAQ ແລະ ເອກະສານທີ່ກ່ຽວຂ້ອງ ໄດ້ທີ່:

ກົມພາສີ: http://www.customs.gov.la
ສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ: http://www.laotradeportal.gov.la


**ສະໜັບສະໜູນການຈັດພິມໂດຍ:**

IFC International Finance Corporation
WORLD BANK GROUP
*Creating Markets, Creating Opportunities*


**ກົມພາສີ**

LAO CUSTOMS

AEO
Lao P D R
Authorized Economic Operator

# ແຜນງານຜູ້ປະກອບການ ມາດຕະຖານເອອີໂອ

## Lao PDR's Authorized Economic Operator Program



## I. ຄວາມເປັນມາ

ແຜນງານຜູ້ປະກອບການມາດຕະຖານເອອີໂອ ແມ່ນວຽກງານໜຶ່ງໃນຂອບມາດຕະຖານຮັກສາຄວາມປອດໄພ ແລະ ການອຳນວຍຄວາມສະດວກທາງການຄ້າ SAFE FRAMEWORK ຂອງອົງການພາສີໂລກ WCO ແມ່ນແຜນງານທີ່ເຂົ້າຮ່ວມດ້ວຍຄວາມສະໝັກໃຈ ຂອງຜູ້ປະກອບການ.

## II. ຈຸດປະສົງ

ເພື່ອຮັບປະກັນຄວາມປອດໄພ ແລະ ອຳນວຍຄວາມສະດວກທາງດ້ານການຄ້າ ໃຫ້ແກ່ຜູ້ປະກອບການມາດຕະຖານເອອີໂອ ແລະ ແນໃສ່ຍົກສູງການປະຕິບັດກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## III. ຜູ້ປະກອບການມາດຕະຖານເອອີໂອ ດຳເນີນທຸລະກິດປະເພດໃດແດ່ ?

ຜູ້ປະກອບການມາດຕະຖານເອອີໂອແມ່ນຜູ້ປະກອບການທີ່ໄດ້ຖືກຮັບຮອງຢ່າງເປັນທາງການຈາກກົມພາສີ ປະກອບມີ:

ຜູ້ນຳເຂົ້າສິນຄ້າ ແລະ ຜູ້ສົ່ງອອກສິນຄ້າ
ຜູ້ບໍລິການຂົນສົ່ງສິນຄ້າ
ຜູ້ບໍລິການຈັດສົ່ງສິນຄ້າ
ຜູ້ບໍລິການສາງສິນຄ້າ
ຜູ້ບໍລິການທ່າເຮືອ ຫຼື ທ່າບົກ
ຜູ້ບໍລິການສະໜາມບິນ
ຜູ້ບໍລິການແຈ້ງພາສີ
ຜູ້ຜະລິດສິນຄ້າ
ຕົວແທນຈຳໜ່າຍສິນຄ້າ.

## IV. ເງື່ອນໄຂການເປັນຜູ້ປະກອບການມາດຕະຖານ ເອອີໂອ

ຜູ້ປະກອບການທີ່ສະເໜີຂໍເປັນຜູ້ປະກອບການມາດຕະຖານເອອີໂອ ຕ້ອງປະກອບມີ 14 ມີເງື່ອນໄຂ ຕາມຄຳແນະນຳຂອງກະຊວງການເງິນວ່າດ້ວຍການຄຸ້ມຄອງຜູ້ປະກອບການມາດຕະຖານເອອີໂອ ເລກທີ 1159/ກງ, ລົງວັນທີ 18 ເມສາ 2019.



## V. ສິ່ງທີ່ຜູ້ປະກອບການໄດ້ຮັບຈາກການເປັນຜູ້ປະກອບການມາດຕະຖານເອອີໂອ ມີຫຍັງ ?



1. ໄດ້ຮັບສິດທິພິເສດ ກ່ຽວກັບການປະຕິບັດຂັ້ນຕອນການແຈ້ງພາສີເປັນລາຍລະອຽດ ແລະ ການກວດປ່ອຍສິນຄ້າ ຢູ່ດ່ານ;
2. ຖືກກຳນົດເປັນທຸລະກິດທີ່ມີຄ່າຄວາມສ່ຽງຕໍ່າໃນລະບົບບໍລິຫານຄວາມສ່ຽງຂອງລັດຖະການພາສີ;
3. ຖືກກວດກາສິນຄ້າຕົວຈິງໜ້ອຍທີ່ສຸດໃນກໍລະນີຈຳເປັນຕ້ອງກວດກາສິນຄ້າຕົວຈິງ ແລະ ອະນຸຍາດໃຫ້ດຳເນີນການກວດກາສິນຄ້າຕົວຈິງຢູ່ສາງສິນຄ້າຂອງຜູ້ປະກອບ ການ;
4. ສາມາດດຳເນີນການແຈ້ງພາສີລ່ວງໜ້າ, ການຮັບຮອງການແຈ້ງ ແລະ ການຊຳລະຄ່າພາສີ ແລະ ພັນທະອື່ນ;
5. ສາມາດດຳເນີນການຊຳລະຄ່າພາສີ ພາຍໃນ 30 ວັນ ນັບແຕ່ວັນນຳເອົາສິນຄ້າ ອອກຈາກສາງ (ນຳສິນຄ້າເຂົ້າມາກ່ອນ ແລະ ຊຳລະຄ່າພາສີ ແລະ ພັນທະອື່ນພາຍຫຼັງ);
6. ສາມາດສະເໜີໃຫ້ລັດຖະການພາສີເປີດການບໍລິການກວດປ່ອຍສິນຄ້ານອກໂມງລັດຖະການ;
7. ພາບພົດຂອງທຸລະກິດ ໄດ້ຮັບການ ຍອມຮັບຈາກທັງພາຍໃນ ແລະ ສາກົນ;
8. ໄລຍະເວລາ ແລະ ຕົ້ນທຶນໃນການດຳເນີນເອກະສານຂອງຜູ້ປະກອບການ ສັ້ນລົງ.